ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ແມ່ຍິງຮາກຖານ ທຫລ ສ້າງກິດຈະກຳຕ້ອນຮັບ ວັນແມ່ຍິງສາກົນ ຄົບຮອບ 109 ປີ



ສະຫະພັນແມ່ຍິງຮາກຖານ ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງການເຄື່ອນໄຫວໃນຫຼາຍດ້ານ, ເປັນການປະກອບສ່ວນເຂົ້າໃນການພັດທະນາວຽກງານຕະຫຼາດເງິນ, ຕະຫຼາດທຶນ ແລະ ຄັ້ງຫຼ້າສຸດກໍ່ໄດ້ສ້າງກິດຈະກຳອອກກຳລັງກາຍດ້ວຍການເຕັ້ນເອໂຣບິກ ແລະ ເຕັ້ນຊຸມບາ ເພື່ອເປັນການສ້າງຂະບວນການສະເຫຼີມສະຫຼອງວັນແມ່ຍິງສາກົນ ຄົບຮອບ 109 ປີ (08 ມີນາ 1910 - 08 ມີນາ 2019) ຂຶ້ນໃນຕອນແລງຂອງວັນທີ 07 ມີນາ 2019 ທີ່ເດີ່ນຂອງສຳນັກງານ ທຫລ, ໂດຍການເຂົ້າຮ່ວມຂອງທ່ານນາງ ສາຍສະໝອນ ຈັນທະຈັກ ປະທານສະຫະພັນແມ່ຍິງ ທຫລ, ສະມາຊິກສະຫະພັນແມ່ຍິງຮາກຖານ ທຫລ ແລະ ພະນັກງານອ້າຍນ້ອງເພດຊາຍຫຼາຍກວ່າ 300 ຄົນ, ໂດຍມີຄູຝຶກທີ່ປະສົບການມາເປັນຜູ້ຝຶກສອນໃຫ້ ເພື່ອປ້ອງກັນການບາດເຈັບຈາກການເຕັ້ນໂດຍວິທີທີ່ບໍ່ຖືກຕ້ອງ ແລະ ເຮັດໃຫ້ກິດຈະກຳໃນຄັ້ງນີ້ເຕັມໄປດ້ວຍບັນຍາກາດຄວາມເບີກບານມ່ວນຊື່ນ.

ການສ້າງກິດຈະກຳອອກກຳລັງກາຍດ້ວຍການເຕັ້ນເອໂຣບິກ ແລະ ເຕັ້ນຊຸມບາ ນີ້ເປັນກິດຈະກຳທີ່ສະຫະພັນແມ່ຍິງຮາກຖານ ທຫລ ຈັດຂຶ້ນເປັນປະຈຳໃນທຸກໆປີ ເພື່ອເປັນການໂຄສະນາສົ່ງເສີມບົດບາດຂອງແມ່ຍິງ ແລະ ສິດສະເໝີພາບຂອງຍິງ-ຊາຍ ໃຫ້ເທົ່າທຽມກັນໃນສັງຄົມ ແລະ ທັງເປັນການສົ່ງເສີມໃຫ້ພະນັກງານ ທຫລ ເຫັນເຖິງຄວາມສຳຄັນຂອງການອອກກຳລັງກາຍເພື່ອບໍລິຫານຮ່າງກາຍໃຫ້ມີສຸຂະພາບທີ່ດີ.





# ຂ່າວ-ພາບ: ວັນປະເສີດ ສົມບູນຂັນ.

ຮັກບ້ານເກີດເມືອງນອນ ໃຊ້ ຈ່າຍ ທອນ ເປັນເງິນກີບ